ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ນາຍົກລັດຖະມົນຕີ

ເລກທີ 45 /ນຍ

ນະຄອນຫຼວງວຽງຈັນ, ວັນທີ 22 ມີນາ 2023

# ຂໍ້ຕົກລົງ

## ວ່າດ້ວຍການແຕ່ງຕັ້ງຄະນະກຳມາທິການແຫ່ງຊາດ ເພື່ອຄວາມກ້າວໜ້າຂອງແມ່ຍິງ, ແມ່ ແລະ ເດັກ

- ອີງຕາມ ກົດໝາຍວ່າດ້ວຍລັດຖະບານແຫ່ງ ສປປ ລາວ (ສະບັບປັບປຸງ) ສະບັບເລກທີ 03/ສພຊ, ລົງວັນທີ 16 ພະຈິກ 2021;
- ອີງຕາມ ດຳລັດວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງຄະນະກຳມາທິການແຫ່ງຊາດເພື່ອຄວາມກ້າວໜ້າຂອງແມ່ຍິງ ແລະ ແມ່-ເດັກ ສະບັບເລກທີ 19/ນຍ, ລົງວັນທີ 25 ມັງກອນ 2023.
- ອີງຕາມ ໜັງສືສະເໜີ ຂອງຄະນະກຳມາທິການແຫ່ງຊາດເພື່ອຄວາມກ້າວໜ້າຂອງແມ່ຍິງ, ແມ່ ແລະ ເດັກ ສະບັບເລກທີ 019/ຄຊກມດ, ລົງວັນທີ 10 ກຸມພາ 2023.

## ນາຍົກລັດຖະມົນຕີ ຕົກລົງ:

**ມາດຕາ 1** ແຕ່ງຕັ້ງຄະນະກຳມາທິການແຫ່ງຊາດເພື່ອຄວາມກ້າວໜ້າຂອງແມ່ຍິງ, ແມ່ ແລະ ເດັກ, ຊຶ່ງປະກອບມີບັນດາທ່ານ ດັ່ງນີ້:

1. ທ່ານ ສຈ. ປອ. ກິແກ້ວ ໄຂຄຳພິທູນ ຮອງນາຍົກລັດຖະມົນຕີ — ເປັນປະທານ
2. ທ່ານ ດຣ. ນາງ ອິນລາວັນ ແກ້ວບຸນພັນ ປະທານສູນກາງສະຫະພັນແມ່ຍິງລາວ — ຮອງປະທານ, ຜູ້ປະຈຳການ
3. ທ່ານ ນາງ ທິບພະກອນ ຈັນທະວົງສາ ຮອງລັດຖະມົນຕີ, ຮອງຫົວໜ້າຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ — ຮອງປະທານ
4. ທ່ານ ນາງ ພອນວັນ ອຸທະວົງ ຮອງລັດຖະມົນຕີ ກະຊວງແຜນການ ແລະ ການລົງທຶນ — ຮອງປະທານ
5. ທ່ານ ປອ. ນາງ ຈັນໂສດາ ພອນທິບ ຮອງປະທານສູນກາງສະຫະພັນແມ່ຍິງລາວ — ຮອງປະທານ
6. ທ່ານ ນາງ ລີວົງ ລາວລີ ຮອງລັດຖະມົນຕີ ກະຊວງພາຍໃນ — ຮອງປະທານ
7. ທ່ານ ບຸນທາ ຊົງເຢີທ່າວ ຮອງລັດຖະມົນຕີ ກະຊວງຍຸຕິທຳ — ຮອງປະທານ
8. ທ່ານ ທອງຜ່ານ ສະຫວັນເພັດ ຮອງລັດຖະມົນ ກະຊວງການຕ່າງປະເທດ — ຮອງປະທານ
9. ທ່ານ ດຣ. ໄພວັນ ແກ້ວປະເສີດ ຮອງລັດຖະມົນຕີ ກະຊວງສາທາລະນະສຸກ — ຮອງປະທານ
10. ທ່ານ ພົນຕີ ວົງຄຳ ພົມມະກອນ ຮອງລັດຖະມົນຕີ ກະຊວງປ້ອງກັນປະເທດ — ກຳມະການ
11. ທ່ານ ພົນຕີ ວັນທອງ ກອງມະນີ ຮອງລັດຖະມົນຕີ ກະຊວງປ້ອງກັນຄວາມສະຫງົບ — ກຳມະການ
12. ທ່ານ ປອ. ຄຳຜາ ພົມມະສອນ ຮອງຫົວໜ້າຫ້ອງວ່າການສູນກາງພັກ — ກຳມະການ
13. ທ່ານ ທອງຈັນ ໂຊງພູມຄຳ ຮອງຫົວໜ້າ ຄະນະຈັດຕັ້ງສູນກາງພັກ — ກຳມະການ
14. ທ່ານ ສຸກຄຳເພັດ ເຮືອງບຸດດີ ຮອງປະທານກວດກາສູນກາງພັກ — ກຳມະການ

15. ທ່ານ ວາລະໄຊ ເລັ່ງສະຫວັດ ຮອງຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກ ກຳມະການ
16. ທ່ານ ນາງ ຂັນທະລີ ສີລິພົງພັນ ຮອງລັດຖະມົນຕີ ກະຊວງສຶກສາທິການ ແລະ ກິລາ ກຳມະການ
17. ທ່ານ ປະເດີມພອນ ສິນທະນີ ຮອງລັດຖະມົນຕີ ກະຊວງແຮງງານ ແລະ ສະຫວັດດີການສັງຄົມ ກຳມະການ
18. ທ່ານ ປອ.ສີນາວາ ສຸພານຸວົງ ຮອງລັດຖະມົນຕີ ກະຊວງ ພະລັງງານ ແລະ ບໍ່ແຮ່ ກຳມະການ
19. ທ່ານ ທອງພັດ ວົງມະນີ ຮອງລັດຖະມົນຕີ ກະຊວງກະສິກຳ ແລະ ປ່າໄມ້ ກຳມະການ
20. ທ່ານ ນາງ ຈັນສຸກ ແສງພະຈັນ ຮອງລັດຖະມົນຕີ ກະຊວງ ອຸດສະຫະກຳ ແລະ ການຄ້າ ກຳມະການ
21. ທ່ານ ນາງ ວິໄລຄຳ ໂພສາລາດ ຮອງລັດຖະມົນຕີ ກະຊວງ ໂຍທາທິການ ແລະ ຂົນສົ່ງ ກຳມະການ
22. ທ່ານ ບຸນປອນ ວັນນະຈິດ ຮອງລັດຖະມົນຕີ ກະຊວງການເງິນ ກຳມະການ
23. ທ່ານ ອຸນທ່ວງ ຂາວພັນ ຮອງລັດຖະມົນຕີ ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ກຳມະການ
24. ທ່ານ ປອ. ໄຊນະຄອນ ອິນທະວົງ ຮອງລັດຖະມົນຕີ ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ກຳມະການ
25. ທ່ານ ປອ. ສັນຕິສຸກ ສິມມາລາວົງ ຮອງລັດຖະມົນຕີ ກະຊວງເຕັກໂນໂລຊີ ແລະ ການສື່ສານ ກຳມະການ
26. ທ່ານ ນາງ ວັດທະນາ ດາລາລອຍ ຮອງຜູ້ວ່າການ ທະນາຄານ ແຫ່ງ ສປປ ລາວ ກຳມະການ
27. ທ່ານ ນາງ ມະນີວັນ ເຢຍປາວເຮີ ຮອງປະທານກຳມາທິການວັດທະນະທຳ-ສັງຄົມ, ສະພາແຫ່ງຊາດ ກຳມະການ
28. ທ່ານ ບຸນຂວາງ ທະວີສັກ ຮອງປະທານ ສານປະຊາຊົນສູງສຸດ ກຳມະການ
29. ທ່ານ ບຸນທັນ ບຸນທະວີໄລ ຮອງຫົວໜ້າອົງການໄອຍະການປະຊາຊົນສູງສຸດ ກຳມະການ
30. ທ່ານ ປອ. ກິແກ້ວ ຈັນທະບູລີ ຮອງປະທານສະຖາບັນວິທະຍາສາດ-ສັງຄົມແຫ່ງຊາດ ກຳມະການ
31. ທ່ານ ນາງ ບຸນມີ ຈຸນລະຈັກ ຮອງຫົວໜ້າ ສະຖາບັນການເມືອງ-ການປົກຄອງແຫ່ງຊາດ ກຳມະການ
32. ທ່ານ ເຢ່ຍເກັຢ່າ ຊົ່ງຈໍ່ຈີ່ງຕົວ ຮອງປະທານ ສູນກາງແນວລາວສ້າງຊາດ ກຳມະການ
33. ທ່ານ ນວນທອງ ສຸວັນວິໄຊ ຮອງເລຂາ ຄະນະບໍລິຫານງານສູນກາງຊາວໜຸ່ມ ປະຊາຊົນປະຕິວັດລາວ ກຳມະການ
34. ທ່ານ ນາງ ອາລີຍະວັນ ອັກຄະວົງ ຮອງປະທານຄະນະບໍລິຫານງານ ສູນກາງສະຫະພັນກຳມະບານລາວ ກຳມະການ
35. ທ່ານ ນາງ ສົມພອຍ ພົມມະຈັກ ຮອງຫົວໜ້າຄະນະໂຄສະນາອົບຮົມສູນກາງພັກ ກຳມະການ
36. ທ່ານ ເຄນ ລໍວັນໄຊ ຮອງປະທານອົງການກວດສອບແຫ່ງລັດ ກຳມະການ
37. ທ່ານ ພົ/ວ. ຄຳທອມ ແສງບົວລົມ ຮອງປະທານສະຫະພັນນັກຮົບເກົ່າແຫ່ງຊາດລາວ ກຳມະການ
38. ທ່ານ ເພັດສະໝອນ ພັນທະວົງ ຮອງຫົວໜ້າຫ້ອງວ່າການສຳນັກງານປະທານປະເທດ ກຳມະການ
39. ທ່ານ ຣສ. ດຣ. ສີງ ເມໂນລາດ ຮອງປະທານ ອົງການກາແດງແຫ່ງຊາດລາວ ກຳມະການ
40. ທ່ານ ນາງ ມະນີວອນ ຫຼວງສົມບັດ ຫົວໜ້າຫ້ອງການຄະນະກຳມາທິການແຫ່ງຊາດ ເພື່ອຄວາມກ້າວໜ້າຂອງແມ່ຍິງ, ແມ່ ແລະ ເດັກ ກຳມະການ.

ໃນກໍລະນີມີການປ່ຽນແປງ, ຍົກຍ້າຍ, ຮັບໜ້າທີ່ໃໝ່ ຫຼື ພັກຜ່ອນເຂົ້າຮັບບຳນານ ຂອງບັນດາທ່ານໃນຄະນະດັ່ງກ່າວນີ້ ແມ່ນໃຫ້ຂະແໜງການທີ່ກ່ຽວຂ້ອງ ສະເໜີແຕ່ງຕັ້ງຜູ້ໃໝ່ປ່ຽນແທນ, ແລ້ວແຈ້ງມາຍັງປະທານຄະນະດັ່ງກ່າວ ເພື່ອຮັບຊາບ, ບັນຈຸເຂົ້າໃນຄະນະ ແລະ ປະຕິບັດໜ້າທີ່ຕາມການມອບໝາຍ.

**ມາດຕາ 2** ຄະນະດັ່ງກ່າວ ມີພາລະບົດບາດ, ສິດ ແລະ ໜ້າທີ່ ໃນການເຄື່ອນໄຫວວຽກງານ ຕາມທີ່ໄດ້ກຳນົດໄວ້ໃນດຳລັດ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງຄະນະກຳມາທິການແຫ່ງຊາດເພື່ອຄວາມກ້າວໜ້າຂອງແມ່ຍິງ, ແມ່ ແລະ ເດັກ ສະບັບເລກທີ 19/ນຍ, ລົງວັນທີ 25 ມັງກອນ 2023.

**ມາດຕາ 3** ບັນດາກະຊວງ, ອົງການ, ອົງການລັດທຽບເທົ່າກະຊວງ, ອົງການຈັດຕັ້ງຂັ້ນສູນກາງ, ອົງການປົກຄອງທ້ອງຖິ່ນ, ພາກສ່ວນອື່ນທີ່ກ່ຽວຂ້ອງ ແລະ ບັນດາທ່ານທີ່ຖືກແຕ່ງຕັ້ງ ຈົ່ງຮັບຮູ້ ແລະ ພ້ອມກັນຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ໃຫ້ໄດ້ຮັບຜົນດີ ແລະ ມີປະສິດທິພາບສູງ.

**ມາດຕາ 4** ຂໍ້ຕົກລົງສະບັບນີ້ ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ ແລະ ປ່ຽນແທນຂໍ້ຕົກລົງ ສະບັບເລກທີ 69/ນຍ, ລົງວັນທີ 30 ກໍລະກົດ 2021.

**ນາຍົກລັດຖະມົນຕີ**

ພັນຄຳ ວິພາວັນ

ສອນໄຊ ສີພັນດອນ